ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ: 09799/ກພສ
ນະຄອນຫຼວງວຽງຈັນ, ວັນທີ: 29 ກັນຍາ 2023

# ແຈ້ງການ

ເຖິງ: ຫົວໜ້າພາສີປະຈຳນະຄອນຫຼວງວຽງຈັນ.
ຫົວໜ້າດ່ານພາສີສາກົນ ສະໜາມບິນວັດໄຕ.
ເລື່ອງ: ເປີດນຳໃຊ້ລະບົບ ການແຈ້ງພາສີແບບເອເລັກໂຕຣນິກ NSWA+.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີສະບັບເລກທີ: 2059/ກງ, ລົງວັນທີ 29 ເມສາ 2021;
- ອີງຕາມ ຄຳແນະນຳຂອງລັດຖະມົນຕີ ກະຊວງການເງິນ ກ່ຽວກັບການແຈ້ງພາສີດ້ວຍລະບົບ NSWA+ ສະບັບເລກທີ 3011/ກງ, ລົງວັນທີ 27/10/2022;
- ອີງຕາມ ຂໍ້ຕົກລົງຂອງກົມພາສີ ສະບັເລກທີ 2434/ກພສ, ລົງວັນທີ 09 ສິງຫາ 2023 ວ່າດ້ວຍ ແຜນການຜັນຂະຫາຍາຍ ແລະ ຝຶກນຳໃຊ້ລະບົບ NSWA+ ຂອງກົມພາສີຢູ່ດ່ານພາສີສາກົນເປົ້າໝາຍໃນຂອບເຂດທົ່ວປະເທດ ;
- ອີງຕາມ ແຜນຜັນຂະຫຍາຍ ແລະ ຝຶກອົບຮົມນຳໃຊ້ລະບົບການແຈ້ງພາສີ NSWA+ ໄປຍັງດ່ານພາສີສາກົນໃນຂອບເຂດທົ່ວປະເທດ ສະບັບເລກທີ 08220/ກພສ, ລົງວັນທີ 07 ກັນຍາ 2023;

ເພື່ອຮັບປະກັນ ໃຫ້ການນຳໃຊ້ລະບົບການແຈ້ງພາສີແບບເອເລັກໂຕຣນິກ ຢູ່ດ່ານພາສີສາກົນ ສະໜາມບິນວັດໄຕ ໂດຍສອດຄ່ອງກັບລະບຽບການ ແລະ ນຳໃຊ້ລະບົບດັ່ງກ່າວໄດ້ຢ່າງມີປະສິດທິພາບ, ຄ່ອງຕົວ ແລະ ເປັນເອກະພາບກັນໃນການຈັດຕັ້ງປະຕິບັດ.

## ກົມພາສີ ອອກແຈ້ງການ ຄື:

1. ຜູ້ປະກອບການທີ່ໄດ້ດຳເນີນກິດຈະການເປັນຜູ້ແຈ້ງພາສີທົ່ວໄປ ແລະ ຜູ້ບໍລິການແຈ້ງພາສີທີ່ມີຈຸດປະສົງໃນການນຳເຂົ້າ-ສົ່ງອອກ ຜ່ານດ່ານພາສີສາກົນສະໜາມບິນວັດໄຕແມ່ນໃຫ້ນຳໃຊ້ລະບົບ ການແຈ້ງພາສີແບບເອເລັກໂຕຣນິກ NSWA+ ໂດຍຈະດຳເນີນການປະກອບເອກສານໃບແຈ້ງພາສີເປັນລາຍລະອຽດຜ່ານລະບົບ ແລະ ແບບເອກະສານປະກອບເຂົ້າລະບົບທັງໝົດ ເລີ່ມແຕ່**ວັນທີ 02 ຕຸລາ 2023** ເປັນຕົ້ນໄປ;
2. ຂັ້ນຕອນ ແລະ ວິທີການ ໃນການປະກອບໃບແຈ້ງພາສີເປັນລາຍລະອຽດ ເຂົ້າໃນລະບົບການແຈ້ງພາສີເອເລັກໂຕຣນິກ NSWA+ ແມ່ນໃຫ້ປະຕິບັດຕາມຄຳແນະນຳຂອງກະຊວງການເງິນ ສະບັບເລກທີ 3011/ກງ, ລົງວັນທີ 27 ກັນຍາ 2023, ວ່າດ້ວຍການແຈ້ງພາສີດ້ວຍລະບົບເອເລັກໂຕຣນິກ NSWA+;
   - ສຳຫຼັບ ຂັ້ນຕອນການກວດປ່ອຍສິນຄ້າ : ແມ່ນໃຫ້ດຳເນີນການນຳໃຊ້ ໃບບັນທຶກກວດປ່ອຍ ໃນການການບັນທຶກການກວດກາສິນຄ້າ ແລະ ບັນທຶກລົງລະບົບ ASYCUDA/NSWA+.

3. ຂັ້ນຕອນ ແລະ ວິທີການລົງລາຍເຊັນເອເລັກໂຕຣນິກ ແມ່ນໃຫ້ປະຕິບັດຕາມຄໍາແນະນໍາຊົ່ວຄາວ ຂອງກະຊວງການເງິນ ສະບັບເລກທີ 3480/ກງ, ລົງວັນທີ 07 ພະຈິກ 2023, ວ່າດ້ວຍການນໍາໃຊ້ລາຍເຊັນເອເລັກໂຕນິກເຂົ້າໃນລະບົບຄຸ້ມຄອງລາຍຮັບງົບປະມານແຫ່ງລັດ;
4. ການຊໍາລະຄ່າພາສີ-ອາກອນ ແລະ ພັນທະອື່ນ ແມ່ນໃຫ້ຊໍາລະຜ່ານລະບົບການຊໍາລະແບບລວມສູນຂອງກະຊວງການເງິນ Finlink ທີ່ສາມາດຊໍາລະຜ່ານບັນດາທະນາຄານທຸລະກິດທີ່ຂຶ້ນກັບ;
5. ພາສີປະຈໍານະຄອນຫຼວງວຽງຈັນ ຊີ້ນໍາດ່ານພາສີສາກົນ ສະໜາມບິນວັດໄຕ, ເພື່ອຮັບຜິດຊອບ ໃນການຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ນໍາໃຊ້ ລະບົບ NSWA+, ພ້ອມທັງປະສານສົມທົບກັບຄະນະຮັບຜິດຊອບຂອງ ກົມພາສີ ແລະ ຂະແໜງການກ່ຽວຂ້ອງ ເພື່ອພ້ອມກັນຈັດຕັ້ງປະຕິບັດ. ພ້ອມນັ້ນ ກໍໃຫ້ອອກແຈ້ງການ ຫຼື ເຜີຍແຜ່ໃຫ້ ແກ່ຜູ້ປະກອບການ ເພື່ອຮັບຊາບ ແລະ ດໍາເນີນການຂຶ້ນທະບຽນລາຍເຊັນໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ;
6. ມອບໃຫ້ ພາສີປະຈໍານະຄອນຫຼວງວຽງຈັນ, ດ່ານພາສີສາກົນ ສະໜາມບິນວັດໄຕ, ຄັງເງິນແຫ່ງຊາດປະຈໍານະຄອນຫຼວງວຽງຈັນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ສໍາເລັດເປັນຢ່າງດີ;
7. ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບຄອນຫຍຸ້ງຍາກ ຫຼື ບັນຫາ, ໃຫ້ສັງລວມລາຍງານຂໍທິດຊີ້ນໍາຈາກກົມພາສີ ເພື່ອດໍາເນີນການ ແກ້ໄຂທັນສະພາບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າກົມພາສີ**

ກະຊວງການເງິນ
ກົມພາສີ

**ພູເຂົາຄໍາ ວັນນະວົງໄຊ**

<u>ບ່ອນນໍາສົ່ງ:</u>

| | |
|---|---|
| - ພະແນກການເງິນນະຄອນຫຼວງວຽງຈັນ | 01 ສະບັບ ເພື່ອຊາບ; |
| - ຄັງເງິນແຫ່ງຊາດປະຈໍານະຄອນຫຼວງວຽງຈັນ | 01 ສະບັບ ເພື່ອຊາບ ແລະ ປະສານສົມທົບ; |
| - ຫ້ອງການພາສີປະຈໍານະຄອນຫຼວງວຽງຈັນ | 01 ສະບັບ ເພື່ອຈັດຕັ້ງປະຕິບັດ; |
| - ພະແນກອ້ອມຂ້າງກົມພາສີ | 01 ສະບັບ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ. |